**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

# ບົດປະເມີນຜົນກະທົບຂອງ ຮ່າງ ດຳລັດ ວ່າດ້ວຍທີ່ດິນກະສິກຳ

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ

### 1.1 ຂໍ້ມູນຕິດຕໍ່ພົວພັນ


ຊື່ກະຊວງ: ກະຊວງກະສິກຳ ແລະ ປ່າໄມ້.

ຊື່ກົມ: ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ/ພະແນກຄຸ້ມຄອງທີ່ດິນກະສິກຳ.

ຊື່ ແລະ ຕຳແໜ່ງຂອງພະນັກງານຮັບຜິດຊອບ:

1) ທ່ານ ກອງແກ້ວ ພະຈອມພົນ — ຮອງຫົວໜ້າກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ
   ເບີໂທ 020 55647036, ອີເມລ: p_kongkeo@hotmail.com;
2) ທ່ານ ຈັນທະສອນ ຄຳໄຊຄ້າຍ — ຫົວໜ້າພະແນກຄຸ້ມຄອງທີ່ດິນກະສິກຳ
   ເບີໂທລະສັບ: 020 55726579, ອີເມລ: khamxaykhay@yahoo.com .


### 1.2 ນິຕິກຳ

ຊື່ຮ່າງນິຕິກຳ: ດຳລັດ ວ່າດ້ວຍທີ່ດິນກະສິກຳ

ຮ່າງນິຕິກຳແມ່ນສະບັບ: ☑ ໃໝ່ ☐ ປັບປຸງ

### 1.3 ກຳນົດເວລາ

- ຄົ້ນຄວ້າ ແລະ ກະກຽມ ສ້າງຮ່າງດຳລັດ ເດືອນ ເມສາ 2013;
- ສຳເລັດການການສ້າງຮ່າງດຳລັດເບື້ອງຕົ້ນ ເດືອນ ກຸມພາ 2017;
- ແຕ່ງຕັ້ງຄະນະຮັບຜິດຊອບສ້າງຮ່າງດຳລັດ ສະບັບເລກທີ 3546/ກປ, ລົງວັນທີ 02 ສິງຫາ 2022;
- ສຳເລັດການທາບທາມຄຳເຫັນຢູ່ສູນກາງ ແລະ ທ້ອງຖິ່ນ ເດືອນ ກໍລະກົດ 2023;
- ສຳເລັດການປັບປຸງຕາມຄຳເຫັນຂອງການທາບທາມ ເດືອນ ສິງຫາ 2023;
- ສະເໜີຜ່ານຄະນະນຳ ກະຊວງກະສິກຳ ແລະ ປ່າໄມ້ ເດືອນ ກຸມພາ 2024;
- ສະເໜີຕໍ່ກະຊວງຍຸຕິທຳ ເພື່ອກວດກາຄວາມສອດຄ່ອງ ເດືອນ ກຸມພາ 2024;
- ສະເໜີເຂົ້າພິຈາລະນາ ໃນກອງປະຊຸມລັດຖະບານ ເດືອນ ມິຖຸນາ 2024.

## 2. ບັນຫາ ແລະ ຈຸດປະສົງ

### 2.1 ບັນຫາ

ໃນໄລຍະຜ່ານມາເຖິງແມ່ນວ່າ ພວກເຮົາໄດ້ມີ ກົດໝາຍ ວ່າດ້ວຍກະສິກຳ ແລະ ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ແຕ່ໃນບາງມາດຕາຂອງກົດໝາຍດັ່ງກ່າວ ກໍບໍ່ສາມາດເວົ້າລົງລາຍລະອຽດໄດ້, ຍັງພົບບັນຫາຫຍຸ້ງຍາກ, ສັບສົນ ເປັນຕົ້ນແມ່ນ ການຫັນປ່ຽນທີ່ດິນກະສິກຳໄປສູ່ເປົ້າໝາຍອື່ນ ຍັງບໍ່ທັນໄດ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ, ການຈັບຈອງ, ບຸກລຸກ ແລະ ບຽດຍຶດທີ່ດິນກະສິກຳ ຍັງມີລັກສະນະແຜ່ຫຼາຍ ບໍ່ນຳໃຊ້ເຂົ້າໃນການຜະລິດ, ປະເປັນເຮື້ອ, ການອະນຸມັດ ແລະ ເຊັນສັນຍາເຊົ່າ ຫຼື ສຳປະທານທີ່ດິນກະສິກຳສຳລັບໂຄງການ ບໍ່ໄປຕາມຂັ້ນຕອນທີ່ກົດໝາຍກຳນົດໄວ້, ນັກທຸລະກິດ ແລະ ຜູ້ປະກອບການ ຍັງບໍ່ທັນໄດ້ປະຕິບັດພັນທະຂອງຕົນຕາມກົດໝາຍ

ຢ່າງເຂັ້ມງວດ, ການນຳໃຊ້ທີ່ດິນກະສິກຳບໍ່ຖືກຕ້ອງຕາມຫຼັກວິຊາການ, ບໍ່ມີການປັບປຸງບຳລຸງດິນ, ບໍ່ມີການບູລະນະປົກປັກຮັກສາ ເຮັດໃຫ້ດິນກະສິກຳເສື່ອມໂຊມ, ນຳໃຊ້ສານເຄມີເກີນອັດຕາ, ມີມົນລະພິດຕົກຄ້າງ ເຮັດໃຫ້ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**2.2 ຈຸດປະສົງ**

- ເພື່ອກຳນົດຫຼັກການ, ລະບຽບການ, ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ການຕິດຕາມກວດກາວຽກງານທີ່ດິນກະສິກຳ;
- ເພື່ອປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳໃຫ້ມີຄວາມຍືນຍົງ ແລະ ອຸດົມສົມບູນ;
- ເພື່ອແນ່ໃສ່ຄ້ຳປະກັນການຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕາມທິດກະສິກຳສີຂຽວ, ສະອາດ ແລະ ຍືນຍົງ;
- ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ມີຄວາມຮັ່ງມີ ແລະ ເຂັ້ມແຂງ.

**3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ**

**3.1 ທາງເລືອກທີ 1: ຮັກສາຕາມສະພາບການໃນປັດຈຸບັນ**

ມີກົດໝາຍ ວ່າດ້ວຍທີ່ດິນ ແລະ ກົດໝາຍ ວ່າດ້ວຍກະສິກຳ ແຕ່ໃນບາງມາດຕາຂອງກົດໝາຍດັ່ງກ່າວ ບໍ່ໄດ້ກຳນົດລາຍລະອຽດ ເຮັດໃຫ້ຍັງພົບບັນຫາຫຍຸ້ງຍາກສັບສົນ ໃນການຈັດຕັ້ງປະຕິບັດ.

**ຜົນດີ:** ບໍ່ເສຍງົບປະມານ.

**ຜົນເສຍ:** ຄາດວ່າຈະເຮັດໃຫ້ການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ (ການນຳໃຊ້ທີ່ດິນກະສິກຳ ທີ່ບໍ່ຖືກຕ້ອງ, ດິນກະສິກຳ ເສື່ອມໂຊມ ແລະ ເນື້ອທີ່ດິນກະສິກຳຫຼຸດລົງ) ແລະ ບໍ່ສາມາດບັນລຸຈຸດປະສົງຂອງການພັດທະນາວຽກງານກະສິກຳ.

**3.2 ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນນິຕິກຳ**

ດ້ວຍການຝຶກອົບຮົມ, ໂຄສະນາເຜີຍແຜ່ ແລະ ການສຶກສາອົບຮົມ.

**ຜົນດີ:** ການຄຸ້ມຄອງທີ່ດິນກະສິກຳ, ການໄກ່ເກ່ຍຂໍ້ຂັດແຍ່ງໄປຕາມປະເພນີທີ່ເຄີຍປະຕິບັດກັນມາ.

**ຜົນເສຍ:** ການຄຸ້ມຄອງທີ່ດິນກະສິກຳ ບໍ່ມີຄວາມເປັນເອກະພາບ, ເກີດມີຂໍ້ຂັດແຍ່ງ ກ່ຽວກັບການນຳໃຊ້ທີ່ດິນກະສະກຳນັບມື້ເພີ່ມຂຶ້ນ.

**3.3 ທາງເລືອກທີ 3: ການສ້າງ ຫຼື ປັບປຸງນິຕິກຳ**

ຈະຕ້ອງໄດ້ສ້າງນິຕິກຳ (ດຳລັດ ວ່າດ້ວຍທີ່ດິນກະສິກຳ).

**ຜົນດີ:** ມີບ່ອນອີງໃນການປັບປຸງແກ້ໄຂບັນຫາ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ, ເຈົ້າໜ້າທີ່ຕ່າງໆ ທີ່ກ່ຽວຂ້ອງມີຄວາມສະດວກໃນການປະຕິບັດວຽກງານ, ສະກັດກັ້ນ ແລະ ຕ້ານການກະທຳຜິດ, ການລະເມີດກົດໝາຍ ແລະ ລະບຽບການ, ປະເທດຊາດມີຄວາມໝັ້ນຄົງທາງດ້ານການຄ້ຳປະກັນສະບຽງອາຫານ.

**ຜົນເສຍ:** ລັດຖະບານຕ້ອງໄດ້ໃຊ້ງົບປະມານ ຈຳນວນໜຶ່ງເຂົ້າໃນການເຄື່ອນໄຫວສ້າງດຳລັດວ່າດ້ວຍທີ່ດິນກະສິກຳ.

**3.4 ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກຳ**

**3.4.1 ເຫດຜົນໃນການເລືອກເອົາວິທີການດັ່ງກ່າວ**

ດຳລັດສະບັບນີ້ ຈະເປັນບ່ອນອີງໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ເວົ້າລວມ, ເວົ້າສະເພາະ ແມ່ນປົກປ້ອງທີ່ດິນກະສິກຳ ຈຳນວນ 4,5 ລ້ານເຮັກຕາ ໃນຂອບເຂດທົ່ວປະເທດ ໃຫ້ໄດ້ຖືກນຳໃຊ້ເຂົ້າໃນການຜະລິດກະສິກຳຕາມແຕ່ລະປະເພດທີ່ດິນກະສິກຳ ທີ່ໄດ້ກຳນົດເອົາໄວ້, ຖືກຕ້ອງຕາມເຕັກນິກວິຊາການ ມີຄວາມແທດເໝາະກັບເງື່ອນໄຂ ແລະ ທ່າແຮງຕາມສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ, ຫຼີກເວັ້ນການ

ນຳໃຊ້ທີ່ບໍ່ຖືກຕ້ອງຕາມເປົ້າໝາຍ, ນຳໃຊ້ສານເຄມີເກີນອັດຕາທີ່ເປັນມົນລະພິດສິ່ງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນໄລຍະສັ້ນ ແລະ ໄລຍະຍາວ ພ້ອມທັງເຮັດໃຫ້ດິນເສື່ອມໂຊມ, ມີການຄຸ້ມຄອງທີ່ດີເປັນລະບົບຄົບຊຸດ ແລະ ເຂັ້ມແຂງ.

ນິຕິກຳທີ່ຈະສ້າງ ຫຼື ປັບປຸງ ນອນຢູ່ໃນປະເພດນິຕິກຳທີ່ຕ້ອງເຮັດບົດປະເມີນຜົນກະທົບຂອງຮ່າງນິຕິກຳບໍ່?

☑ ແມ່ນ ☐ ບໍ່ແມ່ນ

**3.4.2 ການປັບປຸງຮ່າງນິຕິກຳ**

ຮ່າງດຳລັດວ່າດ້ວຍທີ່ດິນກະສິກຳ ແມ່ນດຳລັດທີ່ສ້າງຂຶ້ນໃໝ່.

**3.4.3 ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ**

ນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ຈະຈຳກັດການແຂ່ງຂັນທາງທຸລະກິດໃນ ສປປ ລາວ ຫຼື ບໍ່?

☐ ຈຳກັດ ☑ ບໍ່ຈຳກັດ

**3.4.4 ພັນທະຕໍ່ສາກົນ**

ຮ່າງນິຕິກຳ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼື ບໍ່? ☐ ແມ່ນ ☑ ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະອັນໃດ:

☐ WTO ☐ AEC ☐ FTA ☐ ອື່ນໆ (ກຳນົດແຈ້ງ)

ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງມີຄວາມສອດຄ່ອງກັບພັນທະສາກົນນັ້ນຫຼືບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

**3.4.5 ນິຕິກຳ ທີ່ພົວພັນ**

ໃຫ້ກຳນົດບັນດານິຕິກຳ ທີ່ພົວພັນກັບຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ

1. ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012;
2. ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນໃນໄລຍະໃໝ່ ສະບັບເລກທີ 026/ຄບສພ, ລົງວັນທີ 03 ສິງຫາ 2017;
3. ມະຕິກອງປະຊຸມຂອງສະພາແຫ່ງຊາດ ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030 ສະບັບເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018;
4. ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
5. ກົດໝາຍ ວ່າດ້ວຍກະສິກຳ ສະບັບເລກທີ 098/ສພຊ, ລົງວັນທີ 10 ຕຸລາ 1998;
6. ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
7. ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກ 08/ສພຊ, ລົງວັນທີ 11 ພະຈິກ 2016;
8. ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ) ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
9. ກົດໝາຍ ວ່າດ້ວຍຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012;
10. ກົດໝາຍ ວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
11. ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
12. ດຳລັດ ວ່າດ້ວຍມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ ສະບັບເລກທີ 348/ລບ, ລົງວັນທີ 16 ພະຈິກ 2017;

13. ຂໍ້ຕົກລົງ ວ່າດ້ວຍການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ສະບັບເລກທີ 10/ນຍ, ລົງວັນທີ 05 ກຸມພາ 2019;
14. ຄຳສັ່ງ ວ່າດ້ວຍການເພີ່ມທະວີການຄຸ້ມຄອງນຳໃຊ້ເນື້ອທີ່ດິນເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ ສະບັບເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018;
15. ຄຳສັ່ງ ວ່າດ້ວຍການຈັດຕັ້ງປະຕິບັດ 8 ມາດຕະການຊຸກຍູ້ເສດຖະກິດ ສະບັບເລກທີ 12/ນຍ, ລົງວັນທີ 23 ສິງຫາ 2018;
16. ຄຳສັ່ງ ວ່າດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020.

ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼືບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

ຖ້າບໍ່ສອດຄ່ອງ, ກະລຸນາອະທິບາຍແຈ້ງ

**4. ຄາດຄະເນຜົນກະທົບ ແລະ ການທາບທາມຄຳເຫັນ**

**4.1 ສັງຄົມ**

**4.1.1 ຜົນກະທົບ**

ກຸ່ມຄົນໄດ້ຮັບຜົນກະທົບ ຈາກຮ່າງດຳລັດ ສະບັບນີ້ ແມ່ນກຸ່ມຄົນທີ່ນຳໃຊ້ທີ່ດິນກະສິກຳ ຢູ່ໃນເຂດເປົ້າໝາຍ ຄື: ເຂດຊົນລະປະທານ ທີ່ຮັບປະກັນການຜະລິດ, ເຂດສຳລັບການປູກພືດ ທີ່ມີເອກະລັກສະເພາະເຂດສຳລັບການລ້ຽງສັດ, ເຂດສຳລັບການຄົ້ນຄວ້າທົດລອງ.

ກຳນົດບັນດາຜົນກະທົບທີ່ອາດຈະເກີດຂຶ້ນຈາກນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງຕໍ່ສັງຄົມ (ເຊັ່ນ: ຕໍ່ເສດຖະກິດ, ສິ່ງແວດລ້ອມ, ການຈ້າງງານ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ).

➢ **ຜົນກະທົບທາງບວກ:**

- ຈະເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ເຂົ້າສູ່ລະບົບ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເປັນຕົ້ນ ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ), ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍອາຫານ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ;
- ເພີ່ມປະສິດທິພາບ ແລະ ຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ຮັບປະກັນໄດ້ຄຸນນະພາບ ແລະ ຄວາມປອດໄພຂອງການຜະລິດກະສິກຳ;
- ຫຼຸດຜ່ອນຄວາມສ່ຽງ ແລະ ຮັບປະກັນຄວາມປອດໄພລະດັບສານພິດຕົກຄ້າງຂອງສານເຄມີຢູ່ໃນທີ່ດິນກະສິກຳ.

➢ **ຜົນກະທົບທາງລົບ:**

- ຈະເຮັດໃຫ້ກຸ່ມຄົນຈຳນວນໜຶ່ງທີ່ຄອບຄອງເນື້ອທີ່ດິນກະສິກຳເປັນຈຳນວນຫຼວງຫຼາຍ ເພື່ອເຮັດທຸລະກິດຄ້າຂາຍເກັງກຳໄລ ມີຜົນກະທົບທາງດ້ານຈິດໃຈ ແລະ ເກີດມີທາງສຽງຈົ່ມວ່າ.

**4.1.2 ເງື່ອນໄຂໃນການປະຕິບັດນິຕິກຳ**

ປະຊາຊົນຢູ່ໃນເຂດເປົ້າໝາຍ ຈະຕ້ອງໃຫ້ຄວາມຮ່ວມມື, ອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນກ່ຽວກັບທີ່ດິນກະສິກຳ ທີ່ຖືກຕ້ອງຊັດເຈນ ແລະ ຄົບຖ້ວນໃຫ້ແກ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ, ຄະນະກຳມະການສຳຫຼວດຈັດສັນທີ່ດິນກະສິກຳ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ.

ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດນິຕິກຳ:

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ບໍ່ມີ

ຄ່າໃຊ້ຈ່າຍ ໃນແຕ່ລະປີ: ບໍ່ມີ

#### 4.1.3 ການທາບທາມຄຳເຫັນ

ຄະນະຮັບຜິດຊອບໄດ້ນຳເອົາຮ່າງດຳລັດວ່າດ້ວຍທີ່ດິນກະສິກຳ ລົງທາບທາມຄຳເຫັນຢ່າງເປີດກວ້າງ ຈາກການຈັດຕັ້ງລັດແຕ່ຂັ້ນສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ ຊຶ່ງໄດ້ຈັດເປັນພາກ ມີ ພາກເໜືອ, ພາກກາງ ແລະ ພາກໃຕ້, ພ້ອມທັງ ພິມລົງເວັບໄຊ ຈົດໝາຍເຫດທາງລັດຖະການ (www.laoofficialgazette.gov.la) ເພື່ອທາບທາມຄຳເຫັນທົ່ວໄປ.

#### 4.1.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☐ | ☑ | ☐ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ)* | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ)* | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍ ຕໍ່ວິທີການດຳລົງຊີວິດຂອງບຸກຄົນ)* | ☐ | ☑ | ☐ |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼືປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

### 4.2 ພາກທຸລະກິດ

#### 4.2.1 ຜົນກະທົບ

ການສ້າງຮ່າງດຳລັດວ່າດ້ວຍທີ່ດິນກະສິກຳ ຈະສົ່ງຜົນກະທົບຕໍ່ການລົງທຶນຂອງຜູ້ປະກອບການ ກ່ຽວກັບໂຄງການກໍ່ສ້າງເຂື່ອນໄຟຟ້າ, ຂຸດຄົ້ນບໍ່ແຮ່ ແລະ ການກໍ່ສ້າງພື້ນຖານໂຄງລ່າງອື່ນ ທີ່ມີການຍົກຍ້າຍປະຊາຊົນອອກຈາກພື້ນທີ່ເດີມ.

- **ຜົນກະທົບທາງບວກ:**

ຜູ້ປະກອບການກ່ຽວກັບໂຄງການກໍ່ສ້າງເຂື່ອນໄຟຟ້າ, ຂຸດຄົ້ນບໍ່ແຮ່ ແລະ ການກໍ່ສ້າງພື້ນຖານໂຄງລ່າງອື່ນມີບ່ອນອີງທາງດ້ານກົດໝາຍ ຊຶ່ງຈະສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ.

- **ຜົນກະທົບທາງລົບ:**

ຜູ້ປະກອບການກ່ຽວກັບໂຄງການກໍ່ສ້າງເຂື່ອນໄຟຟ້າ, ຂຸດຄົ້ນບໍ່ແຮ່ ແລະ ການກໍ່ສ້າງພື້ນຖານໂຄງລ່າງອື່ນ ຈະເປັນຜູ້ຮັບຜິດຊອບໂດຍກົງຕໍ່ການທົດແທນຄ່າເສຍຫາຍໃນການຈັດສັນທີ່ດິນກະສິກຳ ແລະ ອາຊີບຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກການລົງທຶນຂອງຕົນ.

#### 4.2.2 ເງື່ອນໄຂໃນການປະຕິບັດນິຕິກຳ

ຮ່າງດຳລັດວ່າດ້ວຍທີ່ດິນກະສິກຳ ຮຽກຮ້ອງໃຫ້ຜູ້ປະກອບການ ຕ້ອງຮັບຜິດຊອບໂດຍກົງໃນການທົດແທນຄ່າເສຍຫາຍ, ຟື້ນຟູຊີວິດການເປັນຢູ່, ເນື້ອທີ່ດິນກະສິກຳຂອງປະຊາຊົນ ແລະ ຄ່າໃຊ້ຈ່າຍອື່ນໆ ຕາມແຜນການຈັດສັນທີ່ດິນກະສິກຳ ແລະ ອາຊີບ ທີ່ໄດ້ຜ່ານການຮັບຮອງຈາກຄະນະກຳມະການ ຈັດສັນທີ່ດິນກະສິກຳ ແລະ ອາຊີບ (ຕົວແທນພາກລັດ).

- ຄາດຄະເນຄ່າສິ້ນເປືອງສະເລ່ຍຕໍ່ຫົວໜ່ວຍທຸລະກິດໃນການປະຕິບັດນິຕິກຳ:

  ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ບໍ່ມີ

  ຄ່າໃຊ້ຈ່າຍ ໃນແຕ່ລະປີ: ບໍ່ມີ

**4.2.3 ການທາບທາມຄຳເຫັນ**

ການສ້າງຮ່າງດຳລັດວ່າດ້ວຍທີ່ດິນກະສິກຳໃນຄັ້ງນີ້ ຄະນະຮັບຜິດຊອບໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ເປີດກວ້າງການທາບທາມຄຳເຫັນທົ່ວໄປດ້ວຍຫຼາຍຮູບແບບ ໂດຍສະເພາະຜ່ານເວັບໄຊຈົດໝາຍເຫດທາງລັດຖະການ (www.laoofficialgazette.gov.la) ເພື່ອໃຫ້ໄດ້ຮັບຄຳເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດແກ່ຄະນະຮັບຜິດຊອບ ໃນການພິຈາລະນາຄົ້ນຄວ້າປັບປຸງຮ່າງດຳລັດວ່າດ້ວຍທີ່ດິນກະສິກຳ.

**4.2.4 ສະຫຼຸບ**

ຖ້າໜຶ່ງໃນຕົວຊີ້ວັດຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍຖືວ່າຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຫຼາຍຕໍ່ພາກທຸລະກິດ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດ ກໍຮຽກຮ້ອງໃຫ້ເຮັດການວິເຄາະແບບລົງເລິກ ກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນຢ່າງກວ້າງຂວາງ ກັບພາກທຸລະກິດ.

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂະແໜງອຸດສາຫະກຳທີ່ໄດ້ຮັບຜົນກະທົບ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງຂະແໜງອຸດສາຫະກຳສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ) | ☑ | ☐ | ☐ |
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວ ທີ່ຖືກຜົນກະທົບ) | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສຳລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ)<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 1.600.000 ກີບ ຕໍ່ໜຶ່ງຫົວໜ່ວຍທຸລະກິດ) | ☑ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການເຮັດທຸລະກິດ ທີ່ມີຢູ່ໃນປັດຈຸບັນ<br>(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດຳເນີນທຸລະກິດ) | ☐ | ☑ | ☐ |
| ການບໍ່ເຫັນດີ ຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☑ | ☐ | ☐ |

**4.3 ລັດຖະບານ**

**4.3.1 ຜົນກະທົບ**

ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ ທີ່ໄດ້ຮັບຜົນກະທົບ ຈາກຮ່າງດຳລັດວ່າດ້ວຍທີ່ດິນກະສິກຳ ແມ່ນບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເຄີຍຕິກລົງ ຫັນປ່ຽນ, ໃຫ້ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ ໃນໄລຍະຜ່ານມາ ຊຶ່ງຕ້ອງຫັນມາລວມສູນຢູ່ຂະແໜງການກະສິກຳ ແລະ ປ່າໄມ້.

➢ **ຜົນກະທົບທາງບວກ:**

- ມີອົງການຈັດຕັ້ງທີ່ຮັບຜິດຊອບວຽກງານທີ່ດິນກະສິກຳຢ່າງລວມສູນ (ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮັບຜິດຊອບໂດຍກົງ);
- ມີການແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ ລະຫວ່າງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນວຽກງານທີ່ດິນກະສິກຳ;
- ເປັນບ່ອນອີງອັນໜັກແໜ້ນໃຫ້ແກ່ອົງການຈັດຕັ້ງທັງສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທີ່ດິນກະສິກຳ;
- ຫັນເອົາວຽກງານທີ່ດິນກະສິກຳເຂົ້າສູ່ກົດໝາຍ.

➢ **ຜົນກະທົບທາງລົບ**

- ຄ່າໃຊ້ຈ່າຍຕ່າງໆໃນການຈັດຕັ້ງປະຕິບັດດຳລັດ ເປັນຕົ້ນ ການຝຶກອົບຮົມການເຄື່ອນໄຫວວຽກງານຂອງພະນັກງານ, ການສ້າງປຶ້ມຄູ່ມື, ແຜ່ນພັບ, ສື່ສິ່ງພິມ, ການໂຄສະນາເຜີຍແຜ່ໃຫ້ປະຊາຊົນ ແລະ ສັງຄົມ;
- ງົບປະມານທີ່ໃຊ້ຈ່າຍເຂົ້າໃນວຽກງານທີ່ດິນກະສິກຳ ຊຶ່ງແມ່ນລັດເປັນຜູ້ຮັບຜິດຊອບໂດຍກົງ

### 4.3.2 ເງື່ອນໄຂໃນການຈັດຕັ້ງປະຕິບັດນິຕິກຳ

ດຳລັດ ວ່າດ້ວຍທີ່ດິນກະສິກຳສະບັບນີ້ ກຳນົດໃຫ້ລັດມີຄວາມຮັບຜິດຊອບໃນການສະໜອງງົບປະມານ, ບຸກຄະລາກອນ ເຂົ້າໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຝຶກອົບຮົມ, ການສ້າງຄູ່ມື, ແຜ່ນພັບ, ສື່ສິ່ງພິມ, ການໂຄສະນາເຜີຍແຜ່ໃຫ້ແກ່ການຈັດຕັ້ງ, ປະຊາຊົນ ແລະ ສັງຄົມ.

- ຄ່າໃຊ້ຈ່າຍເບື້ອງຕົ້ນ (ຖ້າມີ):
  1. ງົບປະມານ ສຳລັບການໂຄສະນາເຜີຍແຜ່;
  2. ງົບປະມານ ສຳລັບການຝຶກອົບຮົມ;
  3. ງົບປະມານ ສຳລັບການສ້າງຄູ່ມື, ແຜ່ນພັບ, ສື່ສິ່ງພິມ.
- ຄ່າໃຊ້ຈ່າຍ ໃນແຕ່ລະປີ: ງົບປະມານ ສຳລັບການຝຶກອົບຮົມ; ການສ້າງຄູ່ມື, ແຜ່ນພັບ, ສື່ສິ່ງພິມ ແລະ ການໂຄສະນາເຜີຍແຜ່ ຈຳນວນໜຶ່ງ.

### 4.3.3 ການທາບທາມຄຳເຫັນ

ບັນດາກະຊວງ, ອົງການລັດຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຖືກທາບທາມຄຳເຫັນ ປະກອບມີ:

- ສະມາຊິກສະພາປະຊາຊົນແຂວງ;
- ຫ້ອງການສຳນັກງານນາຍົກລັດຖະມົນຕີ;
- ກະຊວງຍຸຕິທຳ;
- ຂະແໜງການ ກະສິກຳ ແລະ ປ່າໄມ້;
- ຂະແໜງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ຂະແໜງການ ໂຍທາທິການ ແລະ ຂົນສົ່ງ;
- ຂະແໜງການ ແຜນການ ແລະ ການລົງທຶນ;
- ບັນດາເມືອງ ທີ່ກຳລັງດຳເນີນໂຄງການສຳຫຼວດກຳນົດເຂດ ແລະ ປະເພດ ທີ່ດິນກະສິກຳ.

ໃນການທາບທາມເຫັນວ່າ ບັນດາການຈັດຕັ້ງໄດ້ມີຄວາມເອົາໃຈໃສ່, ມີຄວາມຮັບຜິດຊອບສູງ ປະກອບຄຳເຫັນຕໍ່ກັບເນື້ອໃນ ຮ່າງ ດຳລັດ ແລະ ສະໜັບສະໜູນເປັນຢ່າງສູງໃຫ້ສ້າງດຳລັດດັ່ງກ່າວ.

### 4.3.4 ສະຫຼຸບ

ຖ້າໜຶ່ງໃນຕົວຊີ້ວັດຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍຖືວ່າຮ່າງນິຕິກຳ ທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຫຼາຍ ຕໍ່ລັດຖະບານ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດກໍຮຽກຮ້ອງໃຫ້ຕ້ອງມີການເຮັດວິເຄາະແບບລົງເລິກກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນກັບອົງການຈັດຕັ້ງຂອງລັດຢ່າງກວ້າງຂວາງ.

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ)<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງນິຕິກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ) | ☐ | ☑ | ☐ |
| ຈຳນວນ ອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການ ຢູ່ຂັ້ນແຂວງ) | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ(ສະເລ່ຍ) (ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ) | ☐ | ☑ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ທີ່ມີຢູ່ໃນປັດຈຸບັນ<br>(ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ) | ☐ | ☑ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>(ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງອົງການຈັດຕັ້ງລັດແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☑ | ☐ | ☐ |

## 5. ການຈັດຕັ້ງປະຕິບັດ

### 5.1 ການສະໜັບສະໜູນ ແກ່ບຸກຄົນ

ຄ່າໃຊ້ຈ່າຍຕ່າງໆໃນການສ້າງຄູ່ມື, ສິ່ງອຳນວຍຄວາມສະດວກ ເພື່ອກະຕຸກຊຸກຍູ້ ໃຫ້ບຸກຄົນໄດ້ຮັບຮູ້ ແລະ ເຂົ້າໃຈ ເຊັ່ນ ການຝຶກອົບຮົມ, ການສ້າງປຶ້ມຄູ່ມື, ແຜ່ນພັບ, ສື່ສິ່ງພິມ, ການໂຄສະນາເຜີຍແຜ່ ໃຫ້ປະຊາຊົນ ແລະ ສັງຄົມ ເພື່ອໃຫ້ການຈັດຕັ້ງປະຕິບັດ ດຳລັດໄດ້ຮັບປະສິດທິຜົນ.

### 5.2 ການສະໜັບສະໜູນແກ່ພາກທຸລະກິດ

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍທີ່ດິນກະສິກຳ ລັດຖະບານ ຕ້ອງໄດ້ສະໜອງຂໍ້ມູນຂ່າວສານດ້ານນິຕິກຳ ໃຫ້ແກ່ພາກທຸລະກິດ (ຜູ້ປະກອບການ ແລະ ລວມທັງຊາວກະສິກອນ) ເປັນຕົ້ນ ການສ້າງປຶ້ມຄູ່ມື, ແຜ່ນພັບ, ສື່ສິ່ງພິມ ແລະ ການໂຄສະນາເຜີຍແຜ່ ເພື່ອໃຫ້ການຈັດຕັ້ງປະຕິບັດ ດຳລັດດັ່ງກ່າວ ໄດ້ຮັບປະສິດທິຜົນ.

### 5.3 ແຜນການຈັດຕັ້ງປະຕິບັດ

ພາຍຫຼັງດຳລັດວ່າດ້ວຍທີ່ດິນກະສິກຳ ຖືກຮັບຮອງ ແລະ ມີຜົນສັກສິດແລ້ວ, ພາກສ່ວນທີ່ມີໜ້າທີ່ໃນການຈັດຕັ້ງປະຕິບັດ ເຊັ່ນ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງໄດ້ເອົາໃຈໃສ່ໂຄສະນາເຜີຍແຜ່ດຳລັດສະບັບນີ້ ເພື່ອໃຫ້ມີຄວາມເຂົ້າໃຈ ແລະ ເປັນເອກະພາບກັນລະຫວ່າງອົງການທີ່ມີໜ້າທີ່ຮັບຜິດຊອບວຽກງານທີ່ດິນກະສິກຳ. ພ້ອມກັນນັ້ນ, ກໍຕ້ອງໂຄສະນາເຜີຍແຜ່ ໃຫ້ພົນລະເມືອງໄດ້ຮັບຮູ້ ແລະ ເຂົ້າໃຈ ເພື່ອເປັນການປຸກລະດົມໃຫ້ມີສະຕິເຄົາລົບ ແລະ ປະຕິບັດດຳລັດຢ່າງເຂັ້ມງວດ ຄື:

1. ຈັດກອງປະຊຸມ ເຜີຍແຜ່ໃນຂອບເຂດທົ່ວປະເທດ ຫຼື ເຜີຍແຜ່ໃນຫຼາຍຮູບການ ເປັນຕົ້ນ ໜັງສືພິມ, ວິທະຍຸ, ເວັບໄຊ ແລະ ອື່ນໆ.
2. ສ້າງຄູ່ມື, ແຜ່ນພັບ, ສື່ສິ່ງພິມ ເພື່ອຊ່ວຍຈັດຕັ້ງປະຕິບັດ ດຳລັດດັ່ງກ່າວ.

### 5.4 ງົບປະມານ ແລະ ແຫຼ່ງທຶນ

ງົບປະມານທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໄດ້ມາຈາກ:

- ງົບປະມານລັດ.

### 5.5 ທົບທວນຄືນ

ພາຍຫຼັງດຳລັດວ່າດ້ວຍທີ່ດິນກະສິກຳ ມີຜົນສັກສິດແລ້ວ ໃນທຸກໆ ຫ້າ ປີ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງເປັນໃຈກາງສົມທົບກັບບັນດາຂະແໜງການກ່ຽວຂ້ອງ ທົບທວນຄືນຜົນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເພື່ອເປັນຂໍ້ມູນໃນການປັບປຸງ ຫຼື ແກ້ໄຂວຽກງານທີ່ດິນກະສິກຳ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ ຂອງປະເທດຊາດ ໃນແຕ່ລະໄລຍະ.

## 6. ການອະນຸມັດ

1. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄຳແນະນຳ ຫຼື
2. ☑ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ມີຄຳເຫັນຕໍ່ບົດປະເມີນຜົນ

ນະຄອນຫຼວງວຽງຈັນ, ວັນທີ 22 FEB 2024

**ຫົວໜ້າຄະນະຮັບຜິດຊອບສ້າງ**
**ຮ່າງ ດຳລັດ ວ່າດ້ວຍທີ່ດິນກະສິກຳ**

**ກິແກ້ວ ສີງບາວົງ**